ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 222/ຫກ
ນະຄອນຫຼວງວຽງຈັນ, ວັນທີ 07 ກັນຍາ 2026

ໜັງສືແຈ້ງເຊີນປະມູນ

ເຖິງ: ບັນດາວິສາຫະກິດ ແລະ ບໍລິສັດ ທັງຫຼາຍ.

ເລື່ອງ: ເຂົ້າຮ່ວມການປະມູນການສະໜອງເຄື່ອງຈັກໄຟຟ້າສຳຮອງ ໃຫ້ທະນາຄານແຫ່ງ ສປປ ລາວ.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງ ທຫລ, ສະບັບເລກທີ 601/ທຫລ, ລົງວັນທີ 07 ກໍລະກົດ 2026;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການປະມູນການສະໜອງຈັກໄຟຟ້າສຳຮອງ ແລະ ເຄື່ອງຟອກອາກາດ ຂອງ ໂຮງພິມທະນະບັດ, ສະບັບເລກທີ 787/ທຫລ, ລົງວັນທີ 21 ສິງຫາ 2026.

ຫ້ອງການ,ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງມາຍັງບັນດາວິສາຫະກິດ ແລະ ບໍລິສັດທີ່ສະໜອງເຄື່ອງຈັກກ່ຽວຂ້ອງ ຊາບວ່າ: ທຫລ ມີຈຸດປະສົງຈະຈັດຊື້ເຄື່ອງຈັກໄຟຟ້າສຳຮອງ ຈຳນວນ 1 ເຄື່ອງ ເພື່ອຮັບໃຊ້ວຽກງານວິຊາສະເພາະຂອງ ທຫລ.

ສະນັ້ນ, ທຫລ ຈຶ່ງແຈ້ງມາຍັງບັນດາວິສາຫະກິດ ແລະ ບໍລິສັດ ທີ່ສະໜອງເຄື່ອງຈັກດັ່ງກ່າວ ເຂົ້າຮ່ວມໃນການປະມູນ ໂດຍພາກສ່ວນກ່ຽວຂ້ອງທີ່ຈະເຂົ້າຮ່ວມຕ້ອງມີມາດຕະຖານ-ເງື່ອນໄຂ ເບື້ອງຕົ້ນ ດັ່ງລຸ່ມນີ້:

I. ໄລຍະທີ 1 ຂັ້ນຕອນຂາຍຊອງປະມູນ: ຜູ້ທີ່ຈະສາມາດຊື້ຊອງປະມູນໄດ້ຕ້ອງມີເງື່ອນໄຂຄົບຖ້ວນຄື:

1. ມີໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ທີ່ຂະແໜງການກ່ຽວຂ້ອງ ອອກອະນຸຍາດ ແລະ ນຳໃຊ້ໄດ້ໃນປັດຈຸບັນ;
2. ມີໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ 2025;
3. ມີໃບຢັ້ງຢືນຖານະການເງິນ ຫຼື ຍອດເຫຼືອເງິນຝາກໃນລະດັບດີ ຈາກທະນາຄານທຸລະກິດໃດໜຶ່ງ ແລະ ໃນລາຍງານ ບັນຊີສຳຮອງຢ້ອນຫຼັງ 3 ເດືອນ (ເດືອນ 6-8 ປີ 2026);
4. ມີປະສົບການໃນການດຳເນີນທຸລະກິດກ່ຽວຂ້ອງ ຫຼື ອື່ນໆ ທີ່ຕິດພັນ ຢ່າງໜ້ອຍ 3 ປີ ຂຶ້ນໄປ, ມີຜົນງານໃນການສະໜອງເຄື່ອງຈັກປະເພດດັ່ງກ່າວໃນໄລຍະຜ່ານມາ ເພື່ອນຳສະເໜີຕໍ່ຄະນະກຳມະການກ່ຽວຂ້ອງ (ມີເອກະສານຢັ້ງຢືນມາພ້ອມ);

ສຳລັບມາດຕະຖານ ແລະ ຄຸນສົມບັດໃນການໃຊ້ງານຂອງເຄື່ອງຈັກກ່ຽວຂ້ອງໄດ້ລະບຸຢູ່ໃນເອກະສານຊ້ອນທ້າຍຄັດຕິດມາພ້ອມນີ້.

ໝາຍເຫດ: ບໍລິສັດທີ່ຈະເຂົ້າຮ່ວມຊື້ຊອງປະມູນຕ້ອງປະກອບ ແລະ ສຳເນົາເອກະສານຕາມ 4 ລາຍການຂ້າງເທິງຢ່າງຄົບຖ້ວນ ແລະ ມີການຢັ້ງຢືນຈາກຜູ້ອຳນວຍການບໍລິສັດກ່ຽວຂ້ອງມາພ້ອມ ທຫລ ຈຶ່ງຈະຂາຍຊອງປະມູນໃຫ້ໄດ້. ສຳລັບມູນຄ່າຊື້ຊອງປະມູນ ແມ່ນລາຄາ 2,000,000 ກີບ/ຊອງ, ຊຶ່ງມູນຄ່າດັ່ງກ່າວຈະບໍ່ຖືກສົ່ງຄືນ ບໍ່ວ່າກໍລະນີໃດໆ.

II. ໄລຍະທີ 2 ຂັ້ນຕອນການປະມູນ: ຜູ້ທີ່ໄດ້ຊື້ຊອງປະມູນແລ້ວ ຕ້ອງປະຕິບັດຕາມຂັ້ນຕອນການ ປະມູນຄື:

1. ຕ້ອງປະກອບເອກະສານປະມູນໃຫ້ຄົບຖ້ວນຕາມທີ່ລະບຸໄວ້ໃນເອກະສານ (TOR);

2. ສຳລັບມື້ເປີດຊອງປະມູນ ທຫລ ຈະແຈ້ງການຕາມພາຍຫຼັງ ແລະ ຜູ້ເຂົ້າຮ່ວມການປະມູນ ຕ້ອງຖືຊອງປະມູນ (ຊອງລາຄາ ແລະ ເອກະສານກ່ຽວຂ້ອງຕາມເງື່ອນໄຂທີ່ກຳນົດໄວ້ຂອງຕົນມາພ້ອມ) ໃນມື້ເປີດຊອງຕົວຈິງ ໂດຍຈະເປີດຊອງປະມູນລາຄາ ຂອງແຕ່ລະພາກສ່ວນພ້ອມກັນ ຊ່ອງໜ້າກັບຄະນະກຳມະການກ່ຽວຂ້ອງ;

3. ຖ້າໄດ້ຮັບການຄັດເລືອກ ຈະໄດ້ເຊັນສັນຍາຮ່ວມວຽກກັນ.

ບັນດາວິສາຫະກິດ ແລະ ບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນ ສາມາດພົວພັນຊື້ຊອງປະມູນ ຢູ່ພະແນກບໍລິຫານ, ຫ້ອງການ ທຫລ, ຕັ້ງຢູ່ບ້ານຊຽງຢືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ໝາຍເລກໂທລະສັບ 021 241 268 ເລີ່ມແຕ່ວັນທີ.....8.ກັນຍາ 2026 ຫາ...5..ຕຸລາ 2026.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາວິສາຫະກິດ ແລະ ບໍລິສັດ ເພື່ອຊາບ ແລະ ເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າຫ້ອງການ

ພາບຸລີ ແກ່ນວົງມະຈັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
ທະນາຄານແຫ່ງ ສປປ ລາວ
ໂຮງພິມທະນະບັດ

ເລກທີ 499 /ธพท
ນະຄອນຫຼວງວຽງຈັນ, ວັນທີ 4 ກັນຍາ 2026

ໜັງສືຢັ້ງຢືນສະເໜີເຄື່ອງຈັກປັ່ນໄຟຟ້າສຳຮອງ

1. ລາຍລະອຽດສະເໜີເຄື່ອງຈັກປັ່ນໄຟຟ້າສຳຮອງ

ລຳດັບ	ລາຍການ	ຮຸ່ນ / Model	ຈຳນວນ	ແຮງດັນໄຟ	ກຳລັງໄຟ	ຄວາມຖີ່	ກິໂລວັດ
1	CUMMINS POWER GENERATION SET	GENERATOR SET: MODEL CD-C450S	1	400/230 V	450kva	50Hz	360 kW

2. ລາຍລະອຽດຕູ້ໄຟໄຟອໂຕ້ເມຕິກ ລະຫວ່າງ ໄຟຟ້າລາວ ແລະ ຈັກປັ່ນໄຟສຳຮອງ (AUTOMATIC TRANSFER SWITCH (ATS)

ລຳດັບ	ລາຍການ
1	ຕູ້ໄຟອໂຕ້ເມຕິກ AUTOMATIC TRANSFER SWITCH (ATS): 800A, 4P, 400 V, L-N, IP32 (OPTION)

สแกนด้วย CamScanner

3. ລາຍລະອຽດຕູ້ໄຟ MDB

ລຳດັບ	ລາຍການ
1	**ຕູ້ໄຟຄວບຄຸມຈັກປັ່ນໄຟສຳຮອງ, ຂະໜາດ ແລະ ລາຍລະອຽດ** (800Wx400Dx2000H (MM) SUPPLY THE MAIN DISTRIBUTION BOARD (DB) CUBICLE DB SIZE: 800Wx400Dx2000H (MM) CU.BUSBAR 400A, 100%N,25%G, FLOOR STAND PANEL BOARD INDOOR IP31 FORM OF INTERNAL SEPERATION: FORM 1 FRAME: 2MM STANDARD STEEL DOOR: 2MM. STANDARD STEEL SIDE AND BACK COVER: 1.6MM. STANARD STEEL BOARD BASE: U-IRON, SIZE 100x40x4MM
2	ແບັກເກ້ ACB 320-800A EasyPact MVS008
3	ແບັກເກ້ MCCB 250A EZC250H3250

ຫົວໜ້າໂຮງພິມທະນະບັດ ທຫລ

M. Nammmmm

ນະຄອນ ມະໂນທັມ

สแกนด้วย CamScanner